ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ກະຊວງປ້ອງກັນປະເທດ

ກົມໃຫຍ່ພະລາທິການ

ກົມອຸດສາຫະກຳປ້ອງກັນຊາດ

ເລກທີ 042 /ກອຊ

ວັນທີ 05.11.2008

# ຂໍ້ກຳນົດ

## ກ່ຽວກັບການຄຸ້ມຄອງແລະນຳໃຊ້ວັດຖຸລະເບີດພົນລະເຮືອນ

## ຂອງບັນດາໂຄງການແລະຫົວໜ່ວຍຕ່າງໆ ທີ່ມີການນຳໃຊ້ວັດຖຸລະເບີດພົນລະເຮືອນ

- ອີງໃສ່ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສປປລ ເລກທີ່ 39/ນຍ ລົງວັນທີ່ 12.07.2001 ວ່າດ້ວຍລະບຽບການຄຸ້ມຄອງນຳໃຊ້ວັດຖຸລະເບີດພົນລະເຮືອນ ຢູ່ ສປປລ.
- ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີກະຊວງປ້ອງກັນປະເທດ ເລກທີ່ 88/ກປທ, ລົງວັນທີ່ 12.07.2005 ວ່າດ້ວຍສິດອານຸຍາດນຳເຂົ້າວັດຖຸລະເບີດຈາກຕ່າງປະເທດເຂົ້າໃນ ສປປລ.

ກົມອຸດສາຫະກຳປ້ອງກັນຊາດ ກົມໃຫຍ່ພາລາທິການກອງທັບ ມີຂໍ້ກຳນົດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ວັດຖຸລະເບີດດັ່ງຕໍ່ໄປນີ້:

**<u>ມາດຕາ I</u>** ວ່າດ້ວຍເງື່ອນໄຂການຊື້ວັດຖຸລະເບີດ

1. ບັນດາໂຄງການ, ບໍລິສັດ, ກົມກອງ ທີ່ຕ້ອງການນຳໃຊ້ວັດຖຸລະເບີດ ຕ້ອງປະກອບເອກະສານດັ່ງລຸ່ມນີ້ ເພື່ອຍື່ນສະເໜີກົມອຸດສາຫະກຳປ້ອງກັນຊາດ ພິຈາລະນາ:

- ທະບຽນດຳເນີນທຸລະກິດ ທີ່ກ່ຽວພັນເຖິງການນຳໃຊ້ວັດຖຸລະເບີດຖືກຕ້ອງຕາມກົດໝາຍ.
- ໃບອານຸມັດສະຖານທີ່ຕັ້ງສາງເກັບຮັກສາວັດຖຸລະເບີດ

ຈາກກົມຊູ້ລົບກົມໃຫຍ່ເສນາທິການກອງທັບ

- ໃບສະເໜີເຈດຈຳນົງກິດຈະການຂອງບັນດາໂຄງການ, ບໍລິສັດ, ກົມກອງ ໃນນັ້ນຕ້ອງໄດ້ກຳນົດແຈ້ງກ່ຽວກັບສະຖານທີ່ບ່ອນຈະນຳໃຊ້ວັດຖຸລະເບີດ.

2. ທຸກຄັ້ງທີ່ພົວພັນຊື້ວັດຖຸລະເບີດນຳບໍລິສັດລາວຢູນ ບັນດາໂຄງການ, ບໍລິສັດ, ກົມກອງຕ້ອງປະກອບເອກະສານຄື:

- ໃບອານຸມັດໃຫ້ຊື້ວັດຖຸລະເບີດຈາກກົມອຸດສາຫະກຳປ້ອງກັນຊາດກົມໃຫຍ່ພາລາທິການ.
- ໃບສະເໜີເຈດຈຳນົງກິດຈະການຂອງບັນດາໂຄງການ, ບໍລິສັດ, ກົມກອງ ໃນນັ້ນຕ້ອງກຳນົດແຈ້ງກ່ຽວກັບສະຖານທີ່ບ່ອນຈະນຳໃຊ້ວັດຖຸລະເບີດ.
- ທະບຽນລົດ ຄັນທີ່ຈະຂົນສົ່ງວັດຖຸລະເບີດ.
- ບັດປະຈຳຕົວຂອງຜູ້ຂັບລົດ ແລະ ຜູ້ຕິດຕາມການຂົນສົ່ງ.

3. ຫ້າມບັນດາໂຄງການ, ບໍລິສັດ, ກົມກອງ ນຳວັດຖຸລະເບີດເຂົ້າ ສປປລ ໂດຍບໍ່ໄດ້ຜ່ານການຄົ້ນຄ້ວາຈາກກົມອຸດສາຫະກຳປ້ອງກັນຊາດ ແລະຮັບອານຸຍາດຈາກກະຊວງປ້ອງກັນປະເທດ.

4. ຫ້າມບັນດາໂຄງການ, ບໍລິສັດ, ກົມກອງ ຊື້ຂາຍວັດຖຸລະເບີດນຳກັນໂດຍທີ່ ບໍ່ໄດ້ຮັບອານຸຍາດຈາກກົມອຸດສາຫະກຳປ້ອງກັນຊາດ.

## <u>ມາດຕາ II</u> ວ່າດ້ວຍລະບຽບການຂົນສົ່ງວັດຖຸລະເບີດ

1. ທຸກຄັ້ງ ທີ່ມີການເຄື່ອນຍ້າຍວັດຖຸລະເບີດ ຕ້ອງມີເອກະສານຕິດຕາມຄື:
   - ໃບອະນຸຍາດເຄື່ອນຍ້າຍວັດຖຸລະເບີດ ອອກໃຫ້ໂດຍກົມອຸດສາຫະກຳປ້ອງກັນຊາດ ທີ່ຂຶ້ນກັບກົມໃຫຍ່ພາລາທິການກອງທັບ.
   - ໃບບິນຈ່າຍເຄື່ອງອອກຈາກສາງ, ລະຫວ່າງໃບອະນຸຍາດເຄື່ອນຍ້າຍ ກັບໃບບິນຈ່າຍເຄື່ອງອອກຈາກສາງ ຕ້ອງມີຈຳນວນເຄື່ອງຄືກັນ ຈຶ່ງຖືວ່າເອກະສານຖືກຕ້ອງ.

2. ລົດທຸກຄັນທີ່ຂົນສົ່ງວັດຖຸລະເບີດ ຕ້ອງມີເອກະສານຕິດຕາມລົດຄົບຖ້ວນຖືກຕ້ອງຕາມລະບຽບການຂົນສົ່ງ, ນອກຈາກນັ້ນຕ້ອງມີປ້າຍເຕືອນວັດຖຸອັນຕະລາຍໃສ່ລົດ, ມີຈວຍແດງລາຍຂາວ 4 ອັນ ໃຊ້ສຳລັບເວລາຈອດລົດຕາມທາງ, ມີບັ້ງດັບເພີງຕິດຕົວລົດ ແລະຕ້ອງໄປຕາມເສັ້ນທາງທີ່ໄດ້ກຳນົດ, ບາງກໍລະນີອາດຈະຕ້ອງມີລົດພາທາງ.

3. ຖ້າມີການຂົນສົ່ງວັດຖຸລະເບີດ ໃນກໍລະນີບໍ່ຮັບປະກັນຄວາມປອດໄພ ບັນດາໂຄງການ, ບໍລິສັດ, ກົມກອງ ຕ້ອງມອບໃຫ້ກົມອຸດສາຫະກຳປ້ອງກັນຊາດ ເປັນຜູ້ສະໜອງໃຫ້.

4. ຫ້າມຂົນສົ່ງ ແກັບ ແລະ ວັດຖຸລະເບີດລະເບີດ ໃສ່ໃນລົດຄັນດຽວກັນ.

5. ຫ້າມບໍ່ໃຫ້ຈອດລົດຂົນສົ່ງແກັບ ແລະວັດຖຸລະເບີດຢູ່ບ່ອນຊຸມຊົນ, ຕົວເມືອງ ຫລືສະຖານທີ່ສຳຄັນຕ່າງໆ.

6. ຫ້າມຮັບຄົນໂດຍສານ ແລະບັນທຸກວັດຖຸລະເບີດປົນກັບວັດຖຸສິ່ງຂອງອື່ນໆ.

## <u>ມາດຕາ III</u> ວ່າດ້ວຍເງື່ອນໄຂພື້ນຖານຂອງສາງເກັບຮັກສາວັດຖຸລະເບີດ

1. ທຸກໆ ພາກສ່ວນທີ່ຈະນຳໃຊ້ວັດຖຸລະເບີດ ຕ້ອງມີສາງເກັບຮັກສາປະຈຳໂຄງການ.

2. ການກຳນົດສະຖານທີ່ຕັ້ງສາງເກັບຮັກສາວັດຖຸລະເບີດ ຂອງບັນດາໂຄງການ, ບໍລິສັດ, ກົມກອງຢູ່ທ້ອງຖິ່ນໃດຕ້ອງສົມທົບກັບກອງບັນຊາການທະຫານ (ຫລື ຕຳຫລວດ) ເມືອງ ແລະແຂວງ ແລ້ວສະເໜີເຖິງກົມສູ້ລົບ ກົມໃຫຍ່ເສນາທິການກອງທັບຕົກລົງອານຸມັດເປັນທາງການ. ສ່ວນແຜນຜັງກໍ່ສ້າງສາງເກັບຮັກສາວັດຖຸລະເບີດ ແມ່ນຜ່ານກົມອຸດສາຫະກຳປ້ອງກັນຊາດ ເພື່ອອານຸມັດດ້ານເຕັກນິກ.

3. ສາງເກັບຮັກສາວັດຖຸລະເບີດ ຕ້ອງຕັ້ງຢູ່ບໍລິເວນພູມີປະເທດເໝາະສົມ, ມີຄວາມປອດໄພຄື:
   - ຫ່າງຈາກເຂດນ້ຳຖ້ວມ, ເສັ້ນທາງຄົມມະນາຄົມ ແລະຫ່າງຈາກບ່ອນຊຸມຊົນຢ່າງໜ້ອຍ 500 m.
   - ສາງເກັບຮັກສາແກັບ ແລະ ສາງເກັບຮັກສາວັດຖຸລະເບີດ ຕ້ອງແຍກຈາກກັນ, ຖ້າຢູ່ບໍລິເວນດຽວກັນ ຕ້ອງມີຄູດິນຫລືຊາຍຂັ້ນກາງ.
   - ສາງຕ້ອງລ້ອມຮົ້ວດ້ວຍໜາມໜາມກຈັບ ຫລື ຮົ້ວຕາໜ່າງ, ມີລະບົບກັນຟ້າຜ່າ, ມີລະບົບດັບເພີງ, ມີລະບົບແສງສະຫວ່າງຢູ່ຂ້າງນອກຮົ້ວ, ມີປ້າຍເຕືອນຕ່າງໆ.

- ສາງເກັບຮັກສາວັດຖຸລະເບີດຕ້ອງມີກຸນແຈ ແລະມີການເວນຍາມຕະຫລອດ 24 ຊົ່ວໂມງ.

4. ຫ້າມເກັບຮັກສາ ແກັບ ແລະ ວັດຖຸລະເບີດ ໃສ່ສາງຫລັງດຽວກັນ.

**<u>ມາດຕາ IV</u>     ວ່າດ້ວຍການຄຸ້ມຄອງແລະນຳໃຊ້ວັດຖຸລະເບີດ**

1 ນາຍສາງຄຸ້ມຄອງຕ້ອງມີບັນຊີຕິດຕາມການຮັບເຄື່ອງເຂົ້າສາງ ແລະ ການເບີກຈ່າຍເຄື່ອງອອກຈາກສາງ, ແກັບ ແລະ ວັດຖຸລະເບີດທີ່ໃຊ້ບໍ່ໝົດໃນແຕ່ລະຄັ້ງຕ້ອງເກັບຄືນເຂົ້າສາງໂດຍມີການບັນທຶກເພື່ອຫລີກເວັ້ນການຕົກເຮັ່ຍເສຍຫາຍ.

2. ນາຍສາງຕ້ອງຕິດຕາມການນຳໃຊ້ວັດຖຸລະເບີດເຊັ່ນ: ການເກັບຮັກສາຕ້ອງຖືກຕາມຫຼັກການເຕັກນິກ, ອາຍຸການນຳໃຊ້, ຖ້າມີບັນຫາດ້ານຄຸນນະພາບຕ້ອງເກັບໄວ້ເປັນຫລັກຖານ ແລະສະເໜີໃຫ້ຜູ້ສະໜອງພິຈາລະນາ.

6. ທຸກໆ 03 ເດືອນ ບັນດາໂຄງການ, ບໍລິສັດ, ກົມກອງ ທີ່ນຳໃຊ້ວັດຖຸລະເບີດຕ້ອງສະຫລຸບບັນຊີ, ລາຍງານໃຫ້ກົມອຸດສາຫະກຳປ້ອງກັນຊາດ ແລະ ກອງບັນຊາການທະຫານ(ຫລື ຕຳຫລວດ)ເມືອງ, ແຂວງ ຮັບຊາບ.

7. ຜູ້ທີ່ນຳໃຊ້ວັດຖຸລະເບີດໂດຍກົງ ຕ້ອງໄດ້ຜ່ານການເຝິກອົບຮົມດ້ານວິຊາການ ແລະ ມີໃບຢັ້ງຢືນຈາກອົງການເຝິກອົບຮົມ.

8. ກ່ອນຈະຍິງລະເບີດທຸກຄັ້ງ ບັນດາໂຄງການ, ບໍລິສັດ, ກົມກອງ ຕ້ອງມີແຜນການ ແລະມາດຕາການຄວາມປອດໄພ ແຈ້ງໃຫ້ປະຊາຊົນ, ອຳນາດການປົກຄອງທ້ອງຖິ່ນຊາບລວງໜ້າ 12 ຊົ່ວໂມງ.

9 ໃນກໍລະນີວັດຖຸລະເບີດມີການຕົກເຮັ່ຍເສັຍຫາຍ ຫລື ມີປະກົດການບໍ່ດີ ບັນດາໂຄງການ, ບໍລິສັດ, ກົມກອງ ຕ້ອງລາຍງານດ່ວນໃຫ້ເຈົ້າໜ້າທີ່ຊາບ.

**<u>ມາດຕາ V</u>     ຂໍ້ບັນຍັດສຸດທ້າຍ**

1. ຂໍ້ກຳນົດສະບັບນີ້ໃຊ້ປ່ຽນແທນໃບແຈ້ງການສະບັບ ເລກທີ 121 ລົງວັນທີ 29/6/2005 ຂອງກົມອຸດສາຫະກຳປ້ອງກັນຊາດ.

2. ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

<u>ກົມອຸດສາຫະກຳປ້ອງກັນຊາດ</u>

ກົລາກອນ ບຸນນະພົນ